ວາລະສານ

# ກະສິກຳ ແລະ ປ່າໄມ້

ປະຈຳ ອາທິດວັນທີ 06 ຫາ 10 ພຶດສະພາ 2024




ກອງປະຊຸມວິຊາການ ເພື່ອຜ່ານ ແຜນ ແມ່ບົດການຜະລິດໝາກກ້ຽງ ເພື່ອເປັນສິນຄ້າໃນ ສປປ ລາວ
ແລະ ກະກຽມຮ່າງ ແຜນ ແມ່ບົດພັດທະນາຊາ

ຫ້ອງການກະຊວງກະສິກຳ ແລະ ປ່າໄມ້



# ກອງປະຊຸມວິຊາການ ເພື່ອຜ່ານ ແຜນແມ່ບົດການ ຜະລິດໝາກກ້ຽງ ເພື່ອເປັນສິນຄ້າໃນ ສປປ ລາວ ແລະ ກະກຽມຮ່າງແຜນແມ່ບົດການພັດທະນາຊາ

ກອງປະຊຸມວິຊາການເພື່ອຜ່ານແຜນແມ່ບົດການຜະລິດໝາກກ້ຽງ ເພື່ອເປັນສິນຄ້າໃນ ສປປ ລາວ ແລະ ກະກຽມຮ່າງແຜນແມ່ບົດການພັດທະນາຊາ

ໃນວັນທີ 10 ພຶດສະພາ 2024 ທີ່ຫ້ອງປະຊຸມສູນປ້ອງກັນພືດ ສາລາຄຳ, ກົມປູກຝັງກະຊວງກະສິກຳ ແລະ ປ່າໄມ້ ໄດ້ຈັດກອງປະຊຸມວິຊາການເພື່ອຜ່ານແຜນແມ່ບົດການຜະລິດໝາກກ້ຽງເພື່ອເປັນສິນຄ້າໃນ ສປປ ລາວ ແລະ ກະກຽມຮ່າງແຜນແມ່ບົດພັດທະນາຊາ ຂຶ້ນ ໂດຍການເປັນປະທານ ຂອງທ່ານ ບຸນຈັນ ກົມບຸນຍະສິດ ຫົວໜ້າກົມປູກຝັງກະຊວງກະສິກຳ ແລະ ປ່າໄມ້ ໂດຍມີຮອງຫົວໜ້າກົມ, ຫົວໜ້າສູນ, ຄະນະຊ່ຽວຊານຈາກໂຄງການສ້າງຄວາມອາດສາມາດສຳຫຼັບການຜະລິດໝາກກ້ຽງ, ມ້ອນໄໝ ແລະ ຊາ ຢູ່ ສປປ ລາວ ພ້ອມດ້ວຍພາກສ່ວນທີ່ກ່ຽວຂ້ອງຈາກສູນກາງ ແລະ ພະແນກອ້ອມຂ້າງກົມປູກຝັງ ເຂົ້າຮ່ວມ. ກອງປະຊຸມຄັ້ງນີ້ໄດ້ຮັບຟັງການລາຍງານຄວາມຄືບໜ້າຂອງການຈັດຕັ້ງປະຕິບັດໂຄງການຜະລິດໝາກກ້ຽງເປັນສິນຄ້າ ແລະ ຊາ ຢູ່ ສປປ ລາວ ໂດຍ ທ່ານ ລິດສະໝາ ທອງສະຫວັນ ຮອງຫົວໜ້າພະແນກແຜນການ ແລະ ການຮ່ວມມືກົມປູກຝັງ, ເຊິ່ງທ່ານໄດ້ນຳສະເໜີ ສະພາບລວມຂອງການປູກ ໝາກກ້ຽງ ແລະ ຊາ ໃນ ສປປ ລາວ ທ່າແຮງ, ຂໍ້ຫຍຸ້ງຫຍາກ, ຄວາມຈຳເປັນໃນການພັດທະນາພືດທັງສອງຊະນິດນີ້ ເພື່ອໃຫ້ກ້າວໄປສູ່ການສ້າງລາຍຮັບໃຫ້ຊາວກະສິກອນ ແລະ ປະກອບສ່ວນພັດທະນາເສດຖະກິດ-ສັງຄົມຂອງຊາດ, ຮັບຟັງການນຳສະເໜີຮ່າງແຜນແມ່ບົດການຜະລິດໝາກກ້ຽງ ແລະ ຮ່າງແຜນແມ່ບົດການພັດທະນາຊາ ຈາກຊ່ຽວຊານອົງການອາຫານ ແລະ ການ

ກະເສດ ຈາກນັ້ນ, ບັນດາຜູ້ເຂົ້າຮ່ວມໄດ້ພ້ອມກັນຄົ້ນຄວ້າລະດົມຄວາມຄິດເພື່ອປະກອບໃສ່ຮ່າງດັ່ງກ່າວໃຫ້ມີຄວາມສົມບູນຄົບຖ້ວນ, ໃນຕອນທ້າຍທ່ານ ບຸນຈັນ ກົມບຸນຍະສິດ ໄດ້ກ່າວວ່າ ແຜນແມ່ບົດທີ່ພວກເຮົາກຳລັງສ້າງນີ້ຫາກສົມບູນຄົບຖ້ວນ ຈະກາຍເປັນບ່ອນອີງ ໃຫ້ແກ່ຜູ້ຮ່ວມລົງທຶນທັງຈາກພາຍໃນ ແລະ ຕ່າງປະເທດທີ່ສາມາດຈັບຕ້ອງໄດ້, ກອງປະຊຸມຄັ້ງນີ້ພວກເຮົາໄດ້ຄົ້ນຄວ້າກັນຢ່າງລະອຽດ ເລີ່ມຈາກທ່າແຮງ, ແຫຼ່ງທີ່ມາ, ມາດຕະຖານການຜະລິດ, ລວມໄປເຖິງເອກະລັກທ້ອງຖິ່ນທີ່ພົ້ນເດັ່ນອັນມີຢູ່ແລ້ວ ເພື່ອໃຫ້ມີຊື່ສຽງກວ້າງອອກອີກ ໃຫ້ໝາກກ້ຽງ ແລະ ຊາ ກາຍເປັນພືດຕິດພັນກັບການພັດທະນາເສດຖະກິດ-ສັງຄົມຂອງຊາດ ເປັນຜົນປະໂຫຍດທັງໃນດ້ານເສດຖະກິດ, ສັງຄົມ ແລະ ຜົນປະໂຫຍດດ້ານວັດທະນະທຳໃນອະນາຄົດ.



ຄະນະຮັບຜິດຊອບ:
ທ່ານ ສີປະໄພ ໄຊສົງຄາມ
ທ່ານ ສີສະຫວາດ ທອມດາລາ

ບັນນາທິການ:
ທ່ານ ກິດຊະນະ ພິມມະຈັນ
ທ່ານ ໄຊລາ ສົມມະລາວົງ
ທ່ານ ນ. ທອງພຸດ ວົງພະຈັນ
ທ່ານ ນ. ຄຳແພງ ເກສອນ

ຈັດໜ້າອອກແບບໂດຍ:
ທ່ານ ນ. ສີອຳນອນ ໄຊຍະລາດ

ຕິດຕໍ່ ແລະ ລົງໂຄສະນາໄດ້ທີ່: ພະແນກໂຄສະນາ ແລະ ຂ່າວສານ, ຫ້ອງການກະຊວງ 021 410154;
website: www.maf.gov.la;
Facebook: ຂ່າວສານກະສິກຳ, ປ່າໄມ້ ແລະ ພັດທະນາຊົນນະບົດ;
Youtube: ລາຍການກະສິກຳ;ແລະ ປ່າໄມ້;